# ຈົດໝາຍຂ່າວ
# ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ກໍລະກົດ-ກັນຍາ
2021



## ເນື້ອໃນ ໃນສະບັບນີ້:


### ກອງປະຊຸມ ແລະ ກິດຈະກຳໂດຍ LIWG

- ຊຸມຊົນແຫ່ງການຮຽນຮູ້ ກ່ຽວກັບ ກຳມະສິດທີ່ດິນຂອງແມ່ຍິງ
- ກອງປະຊຸມ ສືບຕໍ່ພັດທະນາປະຕິທິນປີ 2022
- ແຜນວຽກງານສະໜັບສະໜູນຂອງ LIWG ເພື່ອຊຸກຍູ້ການປັບປຸງນະໂຍບາຍ ແລະ ນິຕິກຳ ໃນຂະແໜງການທີ່ດິນ ໃນປະເທດລາວໃຫ້ດີຂື້ນ
- ການຝຶກອົບຮົມ ຄວາມໄພທາງດ້ານດິຈິຕອລ ແລະ ການນຳໃຊ້ອິນເຕີເນັດ

### ກຸ່ມຂະແໜງການຍ່ອຍ

- ກຸ່ມຂະແໜງການຍ່ອຍທີ່ດິນ

### ວຽກງານຂອງໂຄງການລິເລີ່ມ, ສະມາຊິກ ແລະ ຄູ່ຮ່ວມງານ ຂອງ LIWG

- ກິດຈະກຳເດັ່ນຈາກໂຄງການໄລຟ໌, ສະມາຊິກ ແລະ ຄູ່ຮ່ວມງານປະຈຳໄຕມາດ

### ແນະນຳບົດອ່ານ ແລະ ວິດີໂອ

- ບົດຄວາມແນະນຳອ່ານ, ເອກະສານ ແລະ ວິດີໂອ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນ ທຳມະຊາດ

### ຂ່າວເດັ່ນປະຈຳໄຕມາດ

- ຂ່າວເດັ່ນກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ປະຈຳໄຕມາດ


### *ຫົວຂໍ້ເດັ່ນ ປະຈຳໄຕມາດ:*

ແຜນວຽກງານ ສະໜັບສະໜູນຂອງ LIWG ແມ່ນຈະປະກອບສ່ວນຢ່າງມີຄວາມໝາຍ ເຂົ້າໃນການປັບປຸງກອບນິຕິກຳ ໃນການຄຸ້ມຄອງທີ່ດິນ ໃນ ປະເທດລາວ ເພື່ອນຳໄປສູ່ການເຂົ້າເຖິງທີ່ດິນຂອງ ຊຸມຊົນໄດ້ຢ່າງມີຄວາມສະເໝີພາບ ແລະ ມີຄວາມ ໝັ້ນຄົງຫຼາຍຂື້ນ...*ສືບຕໍ່ອ່ານໜ້າທີ 1*

# ກອງປະຊຸມ ແລະ ກິດຈະກຳ ຕ່າງໆໂດຍ ກອງເລຂາ LIWG



## ແຜນວຽກງານສະໜັບສະໜູນຂອງ LIWG ເພື່ອຊຸກຍູ້ການປັບປຸງນະໂຍບາຍ ແລະ ນິຕິກຳ ໃນຂະແໜງການທີ່ດິນ ໃນປະເທດລາວໃຫ້ດີຂື້ນ

ພາຍຫຼັງທີ່ມີການປຶກສາຫາລືຫຼາຍຄັ້ງ ລະຫວ່າງ ທີມງານເຮັດວຽກວິຊາການສະເພາະ ແລະ ບັນດາສະມາຊິກ ໃນທີ່ສຸດ ແຜນວຽກງານ ສະໜັບສະໜູນຂອງ LIWG ຈຶ່ງໄດ້ຮັບຜົນສຳເລັດ ເຊິ່ງແຜນງານນີ້ ແມ່ນຈະສາມາດປະກອບສ່ວນຢ່າງມີຄວາມໝາຍ ເຂົ້າໃນການປັບປຸງກອບນິຕິກຳ ໃນການຄຸ້ມຄອງທີ່ດິນໃນປະເທດລາວ ເພື່ອນຳໄປສູ່ການເຂົ້າເຖິງທີ່ດິນຂອງຊຸມຊົນຢ່າງມີຄວາມສະເໝີພາບ ແລະ ມີຄວາມໝັ້ນຄົງຫຼາຍຂື້ນ ໂດຍພະຍາ ຍາມແກ້ໄຂຊ່ອງວ່າງ ແລະ ປັບປຸງບາງເນື້ອຫາທີ່ຍັງບໍ່ສອດຄ່ອງ ກັບກົດໝາຍ ໂດຍຜ່ານການສ້າງຄວາມເຂັ້ມແຂງທາງດ້ານຄວາມອາດສາມາດໃຫ້ແກ່ບັນດາສະມາຊິກ ເພື່ອຊຸກຍູ້ໃຫ້ມີສ່ວນຮ່ວມໃນຂັ້ນປະຕິບັດໃຫ້ມີປະສິດທິຜົນຫຼາຍຂື້ນ. **ແຜນວຽກງານສະໜັບສະໜູນນີ້ ແມ່ນຈະປະຕິບັດໂດຍອີງໃສ່ 3 ຈຸດປະສົງຫຼັກຄື:**

- ເສີມສ້າງຄວາມເຂັ້ມແຂງ ຂອງບັນດາສະມາຊິກຂອງ LIWG ແລະ ໜ່ວຍງານພາກລັດ ທີ່ມີສ່ວນກ່ຽວຂ້ອງ ໃນວຽກງານດ້ານນະໂຍບາຍທີ່ຕິດພັນກັບທີ່ດິນ
- ການປູກຈິດສຳນຶກ ທາງດ້ານ ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບທີ່ດິນ ແລະ ຜົນກະທົບຕ່າງໆ ທີ່ມີຜົນຕໍ່ຄວາມໝັ້ນຄົງໃນການຄອບຄອງທີ່ດິນ
- ສ້າງການມີສ່ວນຮ່ວມຢ່າງມີຈຸດສຸມ ສຳລັບການສ້າງ ຫຼື ປັບປຸງນິຕິກຳຍ່ອຍ ທີ່ຕິດພັນກັບທີ່ດິນ

ສຳລັບແຜນການປະຕິບັດວຽກງານນີ້ ແມ່ນທາງກອງເລຂາ LIWG ຈະມີການລາຍງານຄວາມຄືບໜ້າຢ່າງເປັນປະຈຳໃຫ້ແກ່ບັນດາສະມາຊິກ, ຄູ່ຮ່ວມງານພາກລັດ ໄດ້ຮັບຮູ້ ແລະ ມີສ່ວນຮ່ວມໃນການປຶກສາຫາລື ຕໍ່ກັບຫົວຂໍ້ ແລະ ແຜນກິດຈະກຳດັ່ງກ່າວ.

## ການຝຶກອົບຮົມ ຄວາມໄພທາງດ້ານດິຈິຕອລ ແລະ ການນຳໃຊ້ອິນເຕີເນັດ

ເນື່ອງຈາກໄລຍະປັດຈຸບັນມີການເຮັດວຽກທາງດ້ານອອນລາຍຫຼາຍຂື້ນ ໃນຂະນະດຽວກັນ ຄວາມບໍ່ປອດໄພທາງດ້ານອິນເຕີເນັດກໍ່ເກີດຂື້ນຫຼາຍເຊັ່ນດຽວກັນ ເຊິ່ງມີຜົນກະທົບຫຼາຍຕໍ່ກັບຊີວິດປະຈຳວັນ ແລະ ການເຮັດວຽກຂອງຫຼາຍຄົນ. ຈາກບັນຫານີ້ ທາງກອງເລຂາໂດຍຮ່ວມກັບ ທີມຄູຝຶກທີ່ຊ່ຽວຊານທາງດ້ານຄວາມປອດໄພທາງດ້ານດິຈິຕອລ ຈຶ່ງໄດ້ຈັດການຝຶກອົບຮົມ ຄວາມໄພທາງດ້ານດິຈິຕອລ ແລະ ການນຳໃຊ້ອິນເຕີເນັດ ແກ່ສະມາຊິກເພື່ອນຳເອົາຄວາມຮູ້ ແລະ ວິທີການຕ່າງໆ ຈາກການເຂົ້າຮ່ວມຝຶກອົບຮົມນີ້ ໄປປັບໃຊ້ໃນການເຮັດວຽກທາງອອນລາຍໃຫ້ມີຄວາມປອດໄພຫຼາຍຂື້ນ.

ສຳລັບການຝຶກອົບຮົມຊຸດທຳອິດ ແມ່ນໄດ້ຈັດຂື້ນໃນ ເດືອນກັນຍາ ແລະ ຊຸດທີສອງ ແມ່ນຈະມີການຈັດຂື້ນໃນເດືອນ ຕຸລາ ນີ້.

## ກອງປະຊຸມ ສືບຕໍ່ພັດທະນາປະຕິທິນປີ 2022 ຂອງທີມງານສ້າງປະຕິທິນ

ພາຍຫຼັງກອງປະຊຸມຄັ້ງທຳອິດທີ່ຈັດຂື້ນໃນເດືອນ ມິຖຸນາ ທີມງານສ້າງປະຕິທິນກໍ່ໄດ້ມີການພົບປະ ແລະ ຈັດປະຊຸມຫຼາຍຄັ້ງ ໃນຊ່ວງເດືອນ ກໍລະກົດ ຫາເດືອນ ກັນຍາ. ຫຼັງຈາກກອງປະຊຸມ ແລະ ການປຶກສາຫາລື ຫຼາຍຄັ້ງທີ່ຈັດຂື້ນ ແລະ ການປະກອບຄຳຄິດເຫັນຈາກບັນດາສະມາຊິກຂອງ LIWG ຕໍ່ຫົວຂໍ້ປະຕິທິນກົດໝາຍປະຈຳປີ 2022 ທາງທີມງານສ້າງປະຕິທິນ ໄດ້ວິເຄາະ ແລະ ຕົກລົງຮ່ວມກັນ ໃນການຄັດເລືອກເອົາ 7 ຫົວຂໍ້ຄື:

- ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ
- ການມີສ່ວນຮ່ວມຂອງປະຊາຊົນ ໃນການໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ
- ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງ
- ສັນຍາກະສິກຳ
- ຄວາມສະເໝີພາບຍິງ-ຊາຍ ໃນວຽກງານກະສິກຳ, ການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ
- ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາໃຫ້ກັບຊຸມຊົນໃນຮູບແບບ ຂອງການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ
- ການສືບທອດມູນມໍລະດົກ

ພ້ອມນັ້ນ ໃນວັນທີ 6 ກັນຍາ 2021 ທາງທີມສ້າງປະຕິທິນກົດໝາຍກໍ່ໄດ້ມີການຈັດກອງປະຊຸມ ເພື່ອແນະນຳຫົວຂໍ້ໃຫ້ແກ່ ໜ່ວຍງານທາງພາກລັດ ທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນ ກົມທີ່ດິນ ເພື່ອເປັນການປຶກສາຫາລື ແລະ ປະກອບຄຳຄິດເຫັນໃສ່ຫົວຂໍ້ ເພື່ອໃຫ້ທີມງານສ້າງປະຕິທິນນຳໄປປັບປຸງເນື້ອໃນໃຫ້ມີຄວາມສອດຄ້ອງ ຫຼາຍຂື້ນ. ຕໍ່ຈາກນີ້ ທາງທີມງານກໍ່ຈະສັງລວມເອົາຄຳຄິດເຫັນຂອງຫຼາຍພາກສ່ວນ ເພື່ອນຳໄປສືບຕໍ່ປັບປຸງ ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນຫຼາຍຂື້ນ ໂດຍສະເພາະແມ່ນເພື່ອເປັນການສະຫຼຸບ ເພື່ອກຽມຈັດພິມ ແລະ ກະກຽມການງານເປີດໂຕປະຕິທິນສະບັບປີ 2022 ໃນເດືອນ ທັນວາ ນີ້.

ສຳລັບປະຕິທິນສະບັບປີ 2021 ແມ່ນສາມາດເຂົ້າເບິ່ງໄດ້ ທີ່ນີ້



## ຊຸມຊົນແຫ່ງການຮຽນຮູ້ ກ່ຽວກັບ ກຳມະສິດທີ່ດິນຂອງແມ່ຍິງ

ເພື່ອເປັນການຊຸກຍູ້ ແລະ ສະໜັບສະໜູນການເຮັດວຽກຂອງສະມາຊິກທາງດ້ານທີ່ດິນ ແລະ ແມ່ຍິງ ກອງເລຂາ LIWG ຈຶ່ງໄດ້ມີການລິເລີ່ມ ສ້າງທີມງານເຮັດວຽກຮ່ວມກັນ (CoP) ກ່ຽວກັບວຽກງານນີ້ ເຊິ່ງພາຍໃນທີມປະກອບມີບັນດາສະມາຊິກຂອງ LIWG ໃນການເຂົ້າຮ່ວມ ຄື: ອົງການ ແຄຣ໌ ສາກົນ ປະຈຳ ສປປ ລາວ, Oxfam ປະຈຳ ສປປລາວ, MCC, Helvetas ລາວ, ສະມາຄົມພັດທະນາ ບົດບາດຍິງ-ຊາຍ (GDA) ແລະ ສະມາຄົມ ເພື່ອພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ (ADWLE) ເຊິ່ງມີການສະໜັບສະໜູນຈາກ ຜູ້ຊ່ຽວຊານດ້ານບົດບາດຍິງ-ຊາຍ ເພື່ອເຮັດວຽກງານນີ້ຮ່ວມກັນ ໂດຍຈະເລັ່ງໃສ່ດຳເນີນກິດຈະກຳສະເພາະຄື:

- ພັດທະນາເຄື່ອງມືການປູກຈິດສຳນຶກກ່ຽວກັບກຳມະສິດທີ່ດິນຂອງແມ່ຍິງ ພ້ອມກັບ ແນະນຳວິທີການ (ບັດກິດຈະກຳ ແລະ ວິດີໂອ)
- ທົດລອງນຳໃຊ້ ເຄື່ອງມືການປູກຈິດສຳນຶກໃນ 2 ບ້ານທີ່ສະມາຊິກ ຂອງ ທີມງານ CoP ມີການນຳເນີນໂຄງການຢູ່

ທີມງານ CoP ຈະປະຊຸມກັນເປັນປະຈຳ ໃນລະຫວ່າງເດືອນກໍລະກົດ ຫາ ເດືອນທັນວາ ປີ 2021 ເພື່ອປຶກສາຫາລື ແຜນກິດຈະກຳໃນການວາງແຜນ ການຈັດຕັ້ງປະຕິບັດກິດຈະກຳຂັ້ນທົດລອງ ຢູ່ໃນເຂດເປົ້າໝາຍ ທີ່ເປັນພື້ນທີ່ໂຄງການຂອງສະມາຊິກທີມງານ ໃນຂັ້ນຊຸມຊົນ. ໃນຊ່ວງເດືອນ ກໍລະກົດ - ກັນຍານີ້ ທີມງານ CoP ກໍໄດ້ມີການພົບປະກັນ ສອງຄັ້ງ ເພື່ອໂອ້ລົມ ແລະ ຄົ້ນຄວ້າ ບັນດາເຄື່ອງມື ການປູກຈິດສຳນຶກ ກ່ຽວກັບກຳມະສິດຕໍ່ກັບທີ່ດິນຂອງແມ່ຍິງ ເພື່ອນຳໄປພິຈາລະນາ ໃນການພັດທະນາບັດກິດຈະກຳ (visual card) ທີ່ຈະມີການນຳໃຊ້ເພື່ອນດຳເນີນກິດຈະກຳໃນຂັ້ນຊຸມຊົນ. ສຳລັບກອງປະຊຸມຄັ້ງຕໍ່ໄປ ທີມງານ CoP ຈະມີການສະຫຼຸບລວມການສ້າງບັດກິດຈະກຳ ແລະ ເລີ່ມພັດທະນາວິດີໂອ ພ້ອມທັງຮ່ວມກັນວາງແຜນກຽມພ້ອມ ເພື່ອນຳໃຊ້ສຳລັບ ການປະຕິບັດກິດຈະກຳໃນຂັ້ນຊຸມຊົນ.

# ໜ່ວຍງານວິຊາການ ຂະແໜງການຍ່ອຍ



## ໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ

ເພື່ອເປັນການສືບຕໍ່ປຶກສາຫາລືວຽກງານ ຂອງຂະແໜງການຍ່ອຍກ່ຽວກັບທີ່ດິນ ທີມງານໜ່ວຍງານວິຊາການ ຈຶ່ງໄດ້ມີການຈັດກອງປະຊຸມຂະແໜງການຍ່ອນທີ່ດິນ (LSSWG) ຄັ້ງທີ 2 ຂຶ້ນ ໃນຮູບແບບພົບປະ ແລະ ຜ່ານຊ່ອງທາງອອນລາຍ ໃນວັນທີ 2 ກັນຍາ ທີ່ນະຄອນຫຼວງວຽງຈັນ.

ພາຍໃນກອງປະຊຸມ ແມ່ນໄດ້ມີການນຳສະເໜີການປະຕິບັດວຽກຜ່ານມາຂອງ 3 ກຸ່ມຄື: (i) ກຸ່ມຍ່ອຍຄົ້ນຄວ້ານິຕິກຳລຸ່ມກົດໝາຍ; (ii) ກຸ່ມຍ່ອຍການຮັບຮູ້ສິດຕາມປະເພນີ ໃນສາມປະເພດປ່າ; (iii) ກຸ່ມຍ່ອຍການສັງລວມ ແລະ ແລກປ່ຽນຂໍ້ມູນ. ຈາກການນຳສະເໜີດັ່ງກ່າວ ຜູ້ເຂົ້າຮ່ວມໄດ້ມີການສົນທະນາ ແລະ ປະກອບຄຳຄິດເຫັນ ກ່ຽວກັບ 3 ຫົວຂໍ້ ເພື່ອຫາຄູ່ຮ່ວມງານ ໃນການເຮັດວຽກຮ່ວມກັນ ຕໍ່ກັບຫົວຂໍ້ (1) ສິດນຳໃຊ້ທີ່ດິນຕາມປະເພນີ, (2) ການວາງແຜນນຳໃຊ້ທີ່ດິນ ແລະ (3) ການຫັນປ່ຽນປະເພດທີ່ດິນ. ພາຍຫຼັງກອງປະຊຸມນີ້ ກໍ່ຈະໄດ້ມີການຈັດກອງປະຊຸມຂຶ້ນອີກ ເພື່ອສົນທະນາລາຍລະອຽດ ໂດຍສະເພາະການມີສ່ວນຮ່ວມຂອງຫຼາຍພາກສ່ວນ ໃນແຕ່ລະຫົວຂໍ້ຍ່ອຍດັ່ງກ່າວ.

ນອກນີ້ ຜູ້ເຂົ້າຮ່ວມກອງປະຊຸມ ຍັງມີການສົນທະນາ ແລະ ແລກປ່ຽນຄວາມຄິດເຫັນ ກັບຕົວແທນຈາກ ທະນາຄານໂລກ ແລະ ທະນາຄານ KFW ກ່ຽວກັບ ໂຄງການເພີ່ມທະວີການຂຶ້ນທະບຽນທີ່ດິນຢ່າງເປັນລະບົບ ທີ່ຈະມີການດຳເນີນ ໃນປະເທດລາວ.

ສຳລັບລາຍລະອຽດເນື້ອຫາ ແລະ ໃຈຄວາມສຳຄັນຂອງກອງປະຊຸມ ທາງທີມງານຮັບຜິດຊອບໄດ້ເຮັດບັນທຶກກອງປະຊຸມໄວ້ ເຊິ່ງຫຼັງຈາກການສັງລວມຢ່າງຄົບຖ້ວນແລ້ວ ທາງກອງເລຂາເຮົາ ຈະສົ່ງຕໍ່ ບົດບັນທຶກກອງປະຊຸມນີ້ ໃຫ້ແກ່ບັນດາສະມາຊິກໃຫ້ຮັບຮູ້.

ກ່ຽວກັບການເຮັດວຽກຂອງ 3 ກຸ່ມຍ່ອຍ ແມ່ນສາມາດອ່ານເພີ່ມເຕີມໃນຈົດໝາຍຂ່າວກ່ອນໜ້ານີ້ຂອງພວກເຮົາໄດ້ ທີ່ນີ້

# ກິດຈະກຳ ຂອງໂຄງການລິເລີ່ມ, ສະມາຊິກ ແລະ ຄູ່ຮ່ວມງານຂອງ LIWG



## ກອງປະຊຸມປຶກສາຫາລື ດຳລັດວ່າດ້ວຍ ປ່າສະຫງວນ ໂດຍອົງການ ອະນຸລັກສັດປ່າ ປະຈຳລາວ

ໃນລະຫວ່າງ ວັນທີ 23 ມິຖຸນາ - ວັນທີ 2 ກໍລະກົດ ກົມປ່າໄມ້ ໄດ້ມີການຈັດກອງປະຊຸມປຶກສາຫາລື ເພື່ອປັບປຸງ ດຳລັດວ່າດ້ວຍ ປ່າສະຫງວນ ຂຶ້ນ ພາຍຫຼັງທີ່ມີການປຶກສາຫາລື ທາງດ້ານວິຊາການຫຼາຍຄັ້ງ ກັບຜູ້ປະຕິບັດວຽກງານ ທາງດ້ານ ປ່າສະຫງວນ ໃນເທດລາວ. ກອງປະຊຸມປຶກສາຫາລື ນີ້ ມີຕົວແທນຈາກ ກະຊວງຍຸຕິທຳ ພ້ອມທັງ ຫ້ອງວ່າການນາຍົກ ລັດຖະມົນຕີ ເຂົ້າຮ່ວມ ໂດຍອົງການ ອະນຸລັກສັດປ່າ ປະຈຳລາວ (WCS) ແມ່ນເຮັດໜ້າທີ່ເປັນ ຄູ່ຮ່ວມງານທາງດ້ານວິຊາການ.

ໂດຍອີງໃສ່ ການປະກາດໃຊ້ ກົດໝາຍວ່າດ້ວຍ ປ່າໄມ້ ປີ 2019, ການຈັດລຽງບູລິມາສິດຄືນໃໝ່ ຕໍ່ກັບວຽງການ ການພັດທະນາສີຂຽວ ເພື່ອຄວາມຍືນຍົງ ແລະ ຄຳໝັ້ນສັນຍາສາກົນ ຈຶ່ງເຮັດໃຫ້ມີການສະເໜີໃຫ້ມີການປັບປຸງ ຮ່າງດຳລັດ ວ່າດ້ວຍ ປ່າສະຫງວນ ເພື່ອໃຫ້ມີປະສິດທິຜົນ ແລະ ມີຄວາມທັນສະໄໝຫຼາຍຂຶ້ນ ຕໍ່ກັບການຄຸ້ມຄອງປ່າສະຫງວນ ພາຍໃນປະເທດ. ພ້ອມນັ້ນ ການປັບປຸງນີ້ແມ່ນຈະຊ່ວຍໃຫ້ມີຄວາມກະຈ່າງແຈ້ງຫຼາຍຂຶ້ນ ຕໍ່ກັບການກຳນົດເຂດປ່າສະຫງວນ ໃນດ້ານສິດອຳນາດຂອງພາກລັດ, ການກຳນົດປະເພດ, ເຂດ ແລະ ບັນຊີລາຍຊື່ ຂັ້ນພາກພື້ນ ແລະ ສາກົນ ຂອງປ່າສະຫງວນ ພ້ອມທັງ ຈະນຳໄປສູ່ ການປັບປຸງ ການແນະນຳກ່ຽວກັບ ການວາງແຜນຄຸ້ມຄອງ ປ່າສະຫງວນໃຫ້ມີຄວາມສອດຄ່ອງກັບມາດ ຕະຖານສາກົນ ຫຼາຍຂຶ້ນ.

ການປັບປຸງ ດຳລັດສະບັບນີ້ ແມ່ນຈະຊ່ວຍ ຊຸກຍູ້ວິທີການຄຸ້ມຄອງພູມີທັດ ຢ່າງມີແຜນທີ່ຊັດເຈນ ແລະ ປະສານງານກັບໜ່ວຍງານອື່ນໆ, ຊຸມຊົນ ແລະ ພາກເອກະຊົນ ໃຫ້ມີປະສິດທິພາບດີຂຶ້ນ ເພື່ອເປັນບາດກ້າວ ໃນການບັນລຸເປົ້າໝາຍການພັດທະນາ ແລະຄຸ້ມຄອງ ຊີວະນາໆພັນໃຫ້ມີຍືນຍົງ ໃນໄລຍະຍາວ.

ອ່ານເພີ່ມເຕີມກ່ຽວກັບວຽກງານນີ້ຂອງ WCS ໄດ້ທີ່ : https://bit.ly/3yJ2yHE

# ກິດຈະກຳ ໂຄງການໄລຟ໌

## ການຝຶກອົບຮົມແບບໃກ້ຊິດແກ່ຄູ່ຮ່ວມງານ ທັງໃນຮູບແບບພົບປະ ແລະ ທາງອອນລາຍ

### ການຝຶກອົບຮົມໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ສະມາຄົມ PSNUA ທີ່ແຂວງ ຄຳມ່ວນ

ໃນເດືອນ ກໍລະກົດທີ່ຜ່ານມາ ທີມຄູຝຶກໄລຟ໌ ໄດ້ມີການສະໜອງການຝຶກອົບຮົມ ໃຫ້ແກ່ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ຫ້ອງ ການຂັ້ນເມືອງທີ່ເມືອງມະຫາໄຊ ແລະ ຍົມມະລາດ ແຂວງຄຳມ່ວນ ແລະ ສະມາຄົມສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ (PSNUA) ໃນຫົວຂໍ້ກ່ຽວກັບ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້ຢ່າງຍືນຍົງ. ຫຼັງຈາກການຝຶກອົບຮົມແກ່ພະນັກງານທີ່ເຂົ້າຮ່ວມແລ້ວ ທີມງານໄດ້ມີການຈັດຕັ້ງປະ ຕິບັດກິດຈະກຳ ການເຜີຍແຜ່ຂໍ້ມູນທາງດ້ານກົດໝາຍທີ່ກ່ຽວຂ້ອງໃນສອງບ້ານເປົ້າໝາຍ ທີ່ເມືອງ ຍົມມະລາດ.ການຝຶກອົບຮົມຄັ້ງນີ້ແມ່ນໄດ້ຮັບການສະໜັບສະໜູນທຶນຮ່ວມ ຈາກອົງການ Bread for the World.



### ການຝຶກອົບຮົມແກ່ ສະມາຄົມ RRDPA ແລະ ຄູ່ຮ່ວມງານພາກລັດ ໃນແຂວງ ໄຊຍະບູລີ

ພາຍໃຕ້ການສະໜັບສະໜູນທຶນຮ່ວມຈາກອົງການ CARE-Danida ໂຄງການ ໄລຟ໌ ແລະ ສະມາຄົມສົ່ງເສີມຄວາມຮູ້ກ່ຽວກັບການຄົ້ນຄວ້າ ແລະ ພັດທະນາຊົນນະບົດ (RRPDA) ໄດ້ຮ່ວມກັນ ຈັດຕັ້ງປະຕິບັດ ຊຸດການຝຶກອົບຮົມ ຫົວຂໍ້ ສັນຍາກະສິກຳ ແລະ ສິດນຳໃຊ້ທີ່ດິນຕາມປະເພນີ ໃນ ເມືອງພຽງ ແລະ ປາກລາຍ ແຂວງ ໄຊຍະບູລີ. ພາຍໃຕ້ການສະໜັບສະໜູນທຶນນີ້ ທີມງານ ອາງຄາດໝາຍວ່າ ຈະມີການຈັດກິດຈະກຳເຜີຍແຜ່ທາງດ້ານກົດໝາຍທີ່ກ່ຽວຂ້ອງ ໃຫ້ໄດ້ຈຳນວນ 12 ບ້ານເປົ້າໝາຍ ໃນ ສອງເມືອງດັ່ງກ່າວ. ສຳລັບ ການຝຶກອົບຮົມ ຫົວຂໍ້ ນີ້ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກ ມີຫຼາຍກໍລະນີເກີດຂຶ້ນໃນສອງເມືອງດັ່ງກ່າວ ໂດຍສະເພາະແມ່ນ ບັນຫາ ການເຮັດສັນ ຍາກະສິກຳ, ບັນຫາທີ່ເກີດຈາກ ແຜນການສ້າງເຂື່ອນພະລັງງານໄຟຟ້າ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້ທີ່ບໍ່ຍືນຍົງ.

ເນື່ອງຈາກ ການແຜ່ລະບາດພະຍາດໂຄວິດ-19 ສະນັ້ນ ການຝຶກອົບຮົມຄັ້ງທຳອິດທີ່ຈັດຂຶ້ນໃນເດືອນ ກໍລະກົດ ແມ່ນຕ້ອງໄດ້ຈຳກັດເວລາ ແລະ ເຮັດໃຫ້ແຜນການ ຝຶກອົບຮົມໃນຕໍ່ໜ້າ ຕ້ອງໄດ້ປັບປ່ຽນໄປຈັດຕັ້ງປະຕິບັດທາງອອນລາຍ. ເຊິ່ງຖ້າຫາກ ສະຖານະການ ການແຜ່ລະບາດໂຄວິດ-19 ມີຈຳນວນຫຼຸດລົງ ແລະ ສາມາດເດີນທາງໄດ້ ທາງທີມຄູຝຶກ ຈະເດີນທາງ ເພື່ອຮ່ວມກັບທີມງານເມືອງ ໃນການລົງເຜີຍແຜ່ຂໍ້ມູນທາງດ້ານກົດໝາຍໃນຂັ້ນບ້ານຮ່ວມກັນ.





### ການຝຶກອົບຮົມ ແກ່ ທີມງານດ້ານທີ່ດິນ ຂອງອົງການ GIZ ລາວ ກ່ຽວກັບ ການເສີມສ້າງ ຄວາມສົມດຸນທາງດ້ານທັກສະໃນການແກ້ໄຂບັນຫາ ແລະ ການໄກ່ເກ່ຍ

ເພື່ອເປັນການປັບປຸງ ຄູ່ມື ການຝຶກອົບຮົມ ໃຫ້ມີເນື້ອໃນເລິກເຊິ່ງຫຼາຍຂຶ້ນ ທີມຄູຝຶກໄລຟ໌ ພ້ອມກັບ ທີມງານດ້ານທີ່ດິນ ຂອງອົງການ GIZ ລາວ ໄດ້ຮ່ວມກັນ ພັດທະນາຄູ່ມື **ການເສີມສ້າງຄວາມສົມດຸນທາງດ້ານທັກສະໃນການແກ້ໄຂບັນຫາ ແລະ ການໄກ່ເກ່ຍ** ເພື່ອເສີມຂະຫຍາຍການມີສ່ວນຮ່ວມຂອງປະຊາຊົນ ໃນຂະແໜງການທີ່ດິນ. ສຳລັບຄູ່ມືນີ້ ແມ່ນຈະຊ່ວຍໃຫ້ ມີຄວາມເຂົ້າໃຈກ່ຽວກັບ ຂະບວນການ ໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ່ງ ໂດຍນຳໃຊ້ກົດໝາຍ ພາຍໃນປະເທດ ພ້ອມທັງໄດ້ອະທິບາຍກ່ຽວກັບ ວິທີການ ນຳໃຊ້ເຄື່ອງມື ໃນໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ່ງ ທີ່ຜູ້ເຂົ້າຮ່ວມຝຶກອົບຮົມ ສາມາດພິຈາລະ ເພື່ອນຳໄປໃຊ້ ຕາມຄວາມເໝາະສົມກັບສະຖານະການ. ຫຼັງຈາກ ມີການພັດທະນາຄູ່ມືນີ້ສຳເລັດແລ້ວ ໃນຊ່ວງເດືອນ ກັນຍານີ້ ທີມຄູຝຶກໄລຟ໌ ກໍ່ໄດ້ມີການຝຶກອົບຮົມແບບໃກ້ຊິດໃຫ້ແກ່ຜູ້ເຂົ້າຮ່ວມຈຳນວນ 31 ທ່ານ ທີ່ແມ່ນພະນັກງານຈາກແຜນງານດ້ານທີ່ດິນ ຂອງ GIZ ລາວ ແລະ ຄູ່ຮ່ວມງານທາງພາກລັດຂອງໂຄງການ ຈາກຂັ້ນແຂວງ ແລະ ເມືອງ ທີ່ແຂວງ ຫົວພັນ.

## ການຝຶກອົບຮົມ ລະຄອນຊຸມຊົນ (Forum Theatre) ຮ່ວມກັບຄູ່ຮ່ວມງານ

ໃນເດືອນ ສິງຫາ ທີມງານໂຄງການໄລຟ໌ ຮ່ວມກັບຄູ່ຮ່ວມງານຈາກອົງການ CCL, PSNUA ແລະ SAEDA ໄດ້ມີການເຂົ້າຮ່ວມຝຶກອົບຮົມ ຮຽນຮູ້ວິທີການ ນຳໃຊ້ການລະຄອນຊຸມຊົນ (Forum Theatre) ເພື່ອນຳໃຊ້ ເຂົ້າໃນການຝຶກອົບຮົມ. ການລະຄອນຊຸມຊົນ ແມ່ນວິທີການໜຶ່ງ ທີ່ເໝາະສົມ ເພື່ອຊ່ວຍກະຕຸ້ນໃຫ້ຊຸມຊົນ ສາມາດນຳສະເໜີປະເດັນ ແລະ ບັນຫາທີ່ເກີດຂື້ນໃນຊຸມຊົນຂອງເຂົາເຈົ້າໄດ້ຢ່າງສ້າງສັນ. ພ້ອມນັ້ນ ວິທີການຕ່າງໆ ທີ່ໄດ້ຮຽນຮູ້ ຈາກການລະຄອນຊຸມຊົນນີ້ ແມ່ນຍັງຊ່ວຍໃຫ້ທີມຄູຝຶກທີ່ເຂົ້າຮ່ວມການຝຶກອົບຮົມ ສາມາດສືບຕໍ່ນຳໃຊ້ ແລະ ປັບໃຊ້ເຂົ້າໃນການສອນ ແລະ ຝຶກອົບຮົມຂອງແຕ່ລະອົງການ ເພື່ອໃຫ້ເກີດການມີສ່ວນຮ່ວມ ແລະ ການສົນທະນາຢ່າງສ້າງສັນ.




## ກໍລະນີສຶກສາ: ແນວທາງໃນການປູກຈິດສຳນຶກເພື່ອສະໜັບສະໜູນການຮັບຮູ້ການຄອບຄອງຕາມປະເພນີ ໃນສາມປະເພດປ່າ ທີ່ແຂວງຄຳມ່ວນ




ກໍລະນີສຶກສາສະບັບນີ້ ແມ່ນສາມາດດາວໂລດໄດ້ທີ່: https://bit.ly/3jY7XFI

ໃນປີ 2020 ໂຄງການໄລຟ໌ ຮ່ວມກັບ ໂຄງການ MRLG ແລະ ກົມທີ່ດິນ ໃນການເສີມສ້າງຂີດຄວາມສາມາດ ແລະ ປະຕິບັດແຜນກິດຈະກຳກ່ຽວກັບການປູກຈິດສຳນຶກໃຫ້ແກ່ 17 ບ້ານ ກ່ຽວກັບການຮັບຮູ້ສິດຕາມປະເພນີ ໃນສາມປະເພດປ່າ. ພາຍໃຕ້ແຜນງານນີ້ ໂຄງການໄລຟ໌ ແມ່ນໄດ້ມີການຈັດການຝຶກອົບຮົມແລ້ວ 4 ຄັ້ງ ໃຫ້ແກ່ພະນັກງານ ຈາກຂັ້ນສູນກາງ, ຂັ້ນແຂວງ ແລະ 3 ເມືອງຄື: ຫີນບູນ, ນາກາຍ ແລະ ເຊບັ້ງໄຟ. ຫຼັງຈາກການເຂົ້າຮ່ວມຝຶກອົບຮົມແລ້ວ ຜູ້ເຂົ້າຮ່ວມໄດ້ລົງເຜີຍແຜ່ຂໍ້ມູນໃນບ້ານເປົ້າໝາຍ ເຊິ່ງເປັນບ້ານທີ່ຢູ່ໃນເຂດສາມປະເພດປ່າ ໂດຍທີມງານໄລຟ໌ ໄດ້ຊ່ວຍໃນການກະກຽມແຜນ. ເພື່ອຖອດຖອນບົດຮຽນ ແລະ ຜົນຈາກການຈັດຕັ້ງປະຕິບັດກິດຈະກຳ ໂຄງການໄລຟ໌ ແລະ MRLG ໄດ້ຮ່ວມກັນເກັບກຳຂໍ້ມູນ ເພື່ອເປັນກໍລະນີສຶກສາ ເຊິ່ງກໍລະນີສຶກສາຂອງກິດຈະກຳນີ້ ແມ່ນໄດ້ສະແດງໃຫ້ເຫັນເຖິງ ບາງບັນຫາທີ່ກ່ຽວຂ້ອງ ທີ່ເກີດຂື້ນໃນຂັ້ນບ້ານ, ອະທິບາຍເຖິງວຽກການການເຜີຍແຜ່ ແລະ ການປູກຈິດສຳນຶກ ພ້ອມທັງສະເໜີຂໍ້ແນະນຳ ເພື່ອເປັນແນວທາງໃຫ້ກັບໂຄງການໃນອະນາຄົດ.

ເນື່ອງຈາກການແຜ່ລະບາດພະຍາດໂຄວິດ-19 ແລະ ຂໍ້ຈຳກັດໃນການເດີນທາງ ທີມງານໂຄງການໄລຟ໌ ຈຶ່ງໄດ້ມີການພັດທະນາຄູ່ມືການຝຶກອົບຮົມທາງອອນລາຍ ສຳລັບ ຫົວຂໍ້ກ່ຽວກັບ ສິດທີ່ດິນຕາມປະເພນີ, ການລົງທຶນ ທາງດ້ານກະສິກຳ ແບບມີຄວາມຮັບຜິດຊອບ ແລະ ສັນຍາກະສິກຳ ເຊິ່ງ ທີມງານໄລຟ໌ຈະມີການນຳໃຊ້ຄູ່ມືດັ່ງກ່າວນີ້ ເພື່ອສືບຕໍ່ໃນການຝຶກອົບຮົມໃຫ້ແກ່ຄູ່ຮ່ວມງານ ແລະ ອົງການອື່ນໆ ທີ່ມີຄວາມສົນໃຈ.

ສຳລັບອົງການ ຫຼື ໜ່ວຍງານໃດ ມີຄວາມສົນໃຈ ໃຫ້ທີມງານຄູຝຶກໄລຟ໌ ຝຶກອົບຮົມບັນດາຫົວຂໍ້ດັ່ງກ່າວໃຫ້ ແມ່ນສາມາດປະສານງານຫາ ຫົວໜ້າທີມງານຂອງໂຄງການໄດ້ ທາງອີເມລນີ້: tingkoh@gmail.com.

# ບົດຄວາມແນະນຳອ່ານ



## ການປົກປັກຮັກສາປ່າສະຫງວນແລະການວາງແຜນຈັດສັນປ່າໄມ້ແບບມີສ່ວນຮ່ວມຂອງປະຊາຊົນ

ຫົວຂໍ້ປະຕິທິນກິດໝາຍປະຈຳເດືອນ ກໍລະກົດ-ສິງຫາ 2021 **"ການປົກປັກຮັກສາປ່າສະຫງວນ ແລະ ການວາງແຜນຈັດສັນປ່າໄມ້ແບບມີສ່ວນ ຮ່ວມຂອງປະຊາຊົນ"** ແມ່ນມີຈຸດປະສົງສີ່ໃຫ້ເຫັນເຖິງ ການຈັດຕັ້ງປະຕິບັດບັນດາຫຼັກການ ແລະ ຂັ້ນຕອນໃນການວາງແຜນການປົກປັກສາ, ການຄຸ້ມຄອງປ່າສະຫງວນ ແລະ ນຳໃຊ້ຊັບພະຍາກອນຂອງບ້ານໃຫ້ມີຄວາມຍືນຍົງ. ການດຳເນີນກິດຈະ ກຳດັ່ງກ່າວຕ້ອງມີລັກສະນະທີ່ໃຫ້ປະຊາຊົນພາຍໃນບ້ານ ສາມາດຮັບຮູ້ໄດ້ວ່າ ເຂົາເຈົ້າມີບົດບາດ ແລະ ຄວາມເປັນເຈົ້າການຫຍັງແດ່ ເຊິ່ງຕ້ອງມີຄວາມລະອຽດຈະແຈ້ງ ແລະ ມີການຮັບຮອງເອົາຄັກແນ່ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມີປະສິດທິພາບ.

ອ່ານເພີ່ມເຕີມທີ່: https://bit.ly/2T80olB

## ການປົກປັກຮັກສາ ແລະ ນຳໃຊ້ເຄື່ອງປ່າຂອງດົງໃຫ້ຍືນຍົງ

ຫົວຂໍ້ປະຕິທິນກິດໝາຍປະຈຳເດືອນ ກັນຍາ-ຕຸລາ 2021 **"ການປົກປັກຮັກສາ ແລະ ນຳໃຊ້ເຄື່ອງປ່າຂອງດົງໃຫ້ຍືນຍົງ"** ແມ່ນນຳສະເໜີ ເພື່ອເປັນການສຶກສາ ແລະ ທຳຄວາມເຂົ້າໃຈ ກ່ຽວກັບວິທີການມີສ່ວນຮ່ວມຂອງຊາວບ້ານໃນການຕັດສິນບັນຫາຢ່າງເຕັມສ່ວນ ໂດຍສະເພາະແມ່ນການແບ່ງເຂດນຳໃຊ້ທີ່ດິນ ແລະ ການສ້າງແຜນນຳໃຊ້ທີ່ດິນ-ປ່າໄມ້ ແລະ ເຄື່ອງປ່າຂອງດົງ. ພ້ອມນັ້ນ ກໍ່ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນໃນການເອົາໃຈໃສ່ ໃຫ້ມີການເຂົ້າຮ່ວມຂອງທັງເພດຍິງ ແລະ ຊາຍໃນທຸກຂັ້ນຕອນຂອງຂະບວນການ ໂດຍສະເພາະ ແມ່ນຂັ້ນຕອນການພິຈາລະນາກ່ຽວກັບການກຳນົດ ວິທີການນຳໃຊ້ ແລະ ສິດນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ແລະ ເຄື່ອງປ່າຂອງດົງ.

ອ່ານເພີ່ມເຕີມທີ່: https://bit.ly/3jS0gS2

## ການເຮັດວຽກຮ່ວມກັບຊຸມຊົນໃນການສ້າງວັງສະຫງວນເພື່ອອະນຸລັກສັດນ້ຳ

ໂຄງການ ສົ່ງເສີມການຈັດການ ວຽກງານການປະມົງ ຢູ່ລຽບຕາມແຄມແມ່ນ້ຳຂອງ ທີ່ ແຂວງ ສະຫວັນນະເຂດ ຂອງ ອົງການ WWF-Laos ແມ່ນ ເພື່ອແນໃສ່ ການຄຸ້ມຄອງ ການປະມົງ ແບບມີສ່ວນຮ່ວມ, ການນຳໃຊ້ແບບຍືນຍົງ ແລະ ແນໃສ່ເພີ່ມປະຊາກອນສັດນ້ຳ ເພື່ອຄວາມອຸດົມ ສົມບູນ ທາງທຳມະຊາດໃຫ້ຢູ່ຄຽງຄູ່ກັບຊີວິດການເປັນຢູ່ຂອງຊຸມຊົນ ທີ່ດຳລົງຊີວິດ ລຽບຕາມແຄມແມ່ນ້ຳຂອງ ໃນແຂວງສະຫວັນນະເຂດ.

*"ການປຶກສາຫາລື ກັບຊຸມຊົນ ຕໍ່ວຽກງານອະນຸລັກ ເປັນໜຶ່ງໃນສິ່ງທີ່ອົງການ ພວກເຮົາ ໃຫ້ຄວາມສຳຄັນ ທີ່ພວກເຮົາຕ້ອງເຮັດ ເພື່ອໃຫ້ໝັ້ນໃຈວ່າ ປະຊາຊົນມີສ່ວນຮ່ວມ ແລະ ເຂົ້າໃຈກ່ຽວກັບສິ່ງທີ່ ຈະເຮັດຮ່ວມກັນ ແລະ ຜົນປະໂຫຍດທີ່ຊຸມຊົນຈະໄດ້ຮັບ",* ພະນັກງານວິຊາການປະມົງຊຸມຊົນ ອົງການ WWF-Laos ປະຈຳແຂວງ ສະຫວັນນະເຂດ ກ່າວ.

ອ່ານບົດຄວາມສະບັບເຕັມທີ່: https://bit.ly/2VO6SqZ

## ການຄອບຄອງທີ່ດິນລວມໝູ່, ບົດບາດຂອງໜ່ວຍງານລັດເພື່ອຕອບສະໜອງຄວາມຕ້ອງການຂອງຊາວກະສິກອນ

ຈາກບົດສຶກສາລ່າສຸດໃຫ້ຮູ້ວ່າ ການຈັດລະບົບທີ່ດິນຕາມປະເພນີ ໃນປະເທດລາວ ມີການຜັນແປຕະຫຼອດເວລາ ເຊິ່ງເກີດຈາກຮູບແບບອຳນາດ ທີ່ແຕກຕ່າງກັນ ພາຍໃນຊຸມຊົນ, ລະຫວ່າງຊຸມຊົນ ແລະ ໜ່ວຍງານຕ່າງໆຂອງລັດຖະບານ.

ໃນບົດສຶກສາໄດ້ນຳສະເໜີວ່າ ການທຳຄວາມເຂົ້າໃຈໃຫ້ຫຼາຍຂຶ້ນ ວ່າບັນດາຊຸມຊົນທ້ອງຖິ່ນ ມີການປັບຮູບແບບການຄອບຄອງທີ່ດິນຄືນໃໝ່ຄືແນວໃດນັ້ນ ບໍ່ພຽງແຕ່ມີຄວາມສຳຄັນ ເພື່ອປັບປຸງຄວາມໝັ້ນຄົງ ທາງດ້ານສະບຽງອາຫານໃນປະເທດເທົ່ານັ້ນ ແຕ່ຍັງມີຄວາມສຳຄັນ ໃນການສົ່ງເສີມ ໃຫ້ບັນດາຊາວກະສິກອນ ສາມາດບັນລຸຄວາມເປັນອະທິປະໄຕທາງອາຫານໄດ້ດ້ວຍ.

ອ່ານບົດຄວາມສະບັບເຕັມ (ພາສາອັງກິດ) ທີ່: https://bit.ly/3DZnqxB

# ເອກະສານ ແລະ ວິດີໂອ



## ບົດລາຍງານວິໄຈ ເສັ້ນທາງສູ່ລະບົບສະບຽງອາຫານທີ່ຍືນຍົງ ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ 2021




ບົດລາຍງານ ແມ່ນມາຈາກ ກອງປະຊຸມປຶກສາຫາລືລະດັບຊາດ ໃນ ສປປ ລາວ ເຊິ່ງເຜີຍແຜ່ ໂດຍ ອົງການ ສປຊ ປະຈຳລາວ ເພື່ອກະກຽມໃຫ້ແກ່ ກອງປະຊຸມສຸດຍອດລະບົບ ສະບຽງອາຫານໂລກ 2021. ບົດລາຍງານນີ້ ໄດ້ສຶກສາເຖິງ ລະບົບອາຫານທັງໝົດ ໂດຍໄດ້ກຳນົດເຖິງ ໂອກາດ ແລະ ສິ່ງທ້າທາຍ ພ້ອມທັງມີການສຶກສາເຖິງ ທິດທາງໃນການເຮັດວຽກຮ່ວມກັນ ແລະ ການແລກ ປ່ຽນກ່ຽວກັບປະເດັນ ແລະ ອົງປະກອບຕ່າງໆຂອງລະບົບອາຫານ ໂດຍມີເປົ້າ ໝາຍເພື່ອ ກຳນົດເສັ້ນທາງສູ່ລະບົບອາຫານທີ່ຍືນຍົງຫຼາຍຂຶ້ນໃນປະເທດລາວ.

ໃນອະນາຄົດອັນໃກ້ນີ້, ກະສິກຳຈະຍັງຄົງເປັນແຫຼ່ງລາຍໄດ້ຫຼັກ ແລະ ວິຖີການດຳລົງຊີວິດຂອງປະຊາກອນສ່ວນໃຫຍ່. ບັນດາທຸລະກິດກະສິກຳຂະໜາດໃຫຍ່ ຈະກາຍເປັນຜູ້ມີບົດບາດຫຼັກ ໃນຂະແໜງການກະສິກຳ ແລະ ເຖິງແມ່ນວ່າພວກເຂົາຈະສາມາດປະກອບ ສ່ວນເຂົ້າໃນການສ້າງລາຍໄດ້ ແລະ ໂອກາດໃນການຈ້າງງານຫຼາຍຂຶ້ນກໍ່ຕາມ ແຕ່ກໍ່ຍັງປະກົດມີຜົນກະທົບຫຼາຍປະການ ເຊັ່ນ: (i) ການໃຫ້ສິດນຳໃຊ້ທີ່ດິນ ເພື່ອປູກພືດຊະນິດດຽວໃນພື້ນທີ່ຂະໜາດໃຫຍ່; (ii) ສູນເສຍ ຄວາມຍືດຍຸ່ນໃນຂະແໜງການກະສິກຳ; ແລະ (iii) ສູນເສຍການຄວບຄຸມ ດ້ານການຄຸ້ມຄອງທີ່ດິນ.

ດາວໂລດບົດລາຍງານນີ້ໄດ້ທີ່: https://bit.ly/3q128LI

## ເນື້ອທີ່ປ່າໄມ້ຂອງ ສປປ ລາວ ມີເທົ່າໃດ?

ບົດລາຍງານນີ້ແມ່ນ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຕົວເລກເນື້ອທີ່ປ່າໄມ້ ຈາກບົດລາຍງານຜົນການປະເມີນຊັບພະຍາກອນປ່າໄມ້ສາກົນ ຂອງອົງການອາຫານ ແລະ ການກະເສດ ສປຊ (FAO) ແລະ ບົດລາຍງານຜົນການປະເມີນປ່າໄມ້ ຂອງ ກົມປ່າໄມ້.



ຄຳຖາມທີ່ນ່າສົນໃຈທີ່ລະບຸໄວ້ໃນບົດລາຍງານສະບັບນີ້ແມ່ນວ່າ ເພື່ອບັນລຸຄາດໝາຍສູ້ຊົນເນື້ອທີ່ປົກຫຸ້ມຂອງປ່າໄມ້ໃຫ້ໄດ້ **70%**, ຄຳຖາມທຳອິດທີ່ເຮົາຕ້ອງຖາມເຮົາເອງກໍ່ຄື “ເນື້ອທີ່ປົກຫຸ້ມຂອງປ່າໄມ້ **70%** ທີ່ເປັນຄາດໝາຍນັ້ນ ແມ່ນອີງຕາມຄຳນິຍາມເນື້ອທີ່ປົກຫຸ້ມຂອງປ່າໄມ້ ສະບັບໃດ ແລະ ລວມເອົາປະເພດປ່າໃດແດ່?”

ດາວໂລດບົດລາຍງານນີ້ໄດ້ທີ່: https://bit.ly/3bBK2at

## ບົດລາຍງານ ແລະ ວິດີໂອ: ບົດຮຽນທີ່ດີ ກ່ຽວກັບວຽກງານທີ່ດິນ ໃນອາຊີຕາເວັນອອກສຽງໃຕ້ ແລະ ປາຊີຟິກ ຂອງ BftW

ເພື່ອເປັນການແລກປ່ຽນບົດຮຽນ ຂອງຜົນໄດ້ຮັບຈາກການແລກປ່ຽນບົດຮຽນ ຂອງຄູ່ຮ່ວມງານ ທີ່ ອົງການ Bread for the World (BftW) ໄດ້ມີການສະໜັບສະໜູນ ກ່ຽວກັບວຽກງານສິດທິຕໍ່ກັບທີ່ດິນ ໃນອາຊີຕາເວັນອອກສຽງໃຕ້ ແລະ ປາຊີຟິກ, ອົງການ BftW ຈຶ່ງໄດ້ມີການຮວບຮວມເອົາ ບົດລາຍງານ ແລະ ວິດີໂອຈາກບັນດາຄູ່ຮ່ວມງານ ເພື່ອລວມເປັນບົດລາຍງານ ແລະ ວິດີໂອ ສະບັບລວມ ເພື່ອນຳເອົາ ຂໍ້ມູນ ແລະ ຄວາມຮູ້ນັ້ນ ມາເຜີຍແຜ່ໃຫ້ແກ່ສາທາລະນະ ໄດ້ຮັບຮູ້. ທັງບົດລາຍງານ ແລະ ວິດີໂອ ແມ່ນສາມາດເຂົ້າເບິ່ງໄດ້ທີ່:

- ເບິ່ງວິດີໂອນີ້ໄດ້ທີ່: https://vimeo.com/568386364
- ອ່ານບົດລາຍງານນີ້ໄດ້ທີ່: https://bit.ly/3iIitjK

ເບິ່ງຂໍ້ມູນເພີ່ມເຕີມ ກ່ຽວກັບວຽກງານທາງດ້ານທີ່ດິນຂອງອົງການ BftW ໄດ້ ທີ່ນີ້



# ຂ່າວເດັ່ນປະຈຳໄຕມາດ

## ທະນາຄານໂລກຈະສະໜັບສະໜູນການຄຸ້ມຄອງທີ່ດິນ ແລະ ການອອກໃບຕາດິນ ໃນ ລາວ

ໂຄງການເພີ່ມທະວີການຂຶ້ນທະບຽນທີ່ດິນຢ່າງເປັນລະບົບ ດ້ວຍມູນຄ່າ 31 ລ້ານ ໂດລາ ຈະໄດ້ຖືກຈັດຕັ້ງປະຕິບັດໂດຍກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມໃນໄລຍະຫ້າປີຕໍ່ໜ້າ. ຈຸດປະສົງຂອງໂຄງການແມ່ນເພື່ອສ້າງຄວາມທັນສະໄໝໃຫ້ແກ່ການຄຸ້ມຄອງທີ່ດິນ ແລະ ເພີ່ມການຂຶ້ນທະບຽນທີ່ດິນໃຫ້ຫລາຍຂຶ້ນ ເພື່ອສະໜັບສະໜູນເປົ້າໝາຍຂອງປະເທດໃນການເພີ່ມຜົນປະໂຫຍດຈາກສິດນຳໃຊ້ທີ່ດິນ ທີ່ຖືກຮັບຮູ້ຢ່າງຖືກຕ້ອງໃຫ້ແກ່ປະຊາກອນໃນຈຳນວນຫລາຍຂຶ້ນ.

ອ່ານລາຍລະອຽດຂອງຂ່າວໄດ້ທີ່: https://bit.ly/3nTOWFy

## ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານແຫ່ງ ສປຊ ກ້າວໜ້າສູ່ເປົ້າໝາຍ

ຄະນະລັດຖະບານລາວ ນຳໂດຍ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເຂົ້າຮ່ວມກອງປະຊຸມ ສຸດຍອດດ້ານລະບົບສະບຽງອາຫານ ແຫ່ງ ສປຊ ເພື່ອສົນທະນາ ແລະ ປຶກສາຫາລື ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ແຜນການພັດທະນາດ້ານກະສິກຳ. ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່າວວ່າ ກອງປະຊຸມນີ້ ໄດ້ໃຫ້ຂໍ້ແນະນຳ ທາງດ້ານນະໂຍບາຍທີ່ສຳຄັນ ທີ່ຈະມີສ່ວນສະໜັບສະໜູນຕໍ່ຄວາມມຸ່ງໝັ້ນ ໃນການປັບຮູບແບບໃໝ່ ຂອງການປະຕິບັດໃນລະດັບປະເທດ ຕໍ່ກັບການປ່ຽນແປງລະບົບສະບຽງອາຫານ ຂອງປະເທດລາວ.

ອ່ານລາຍລະອຽດຂອງຂ່າວໄດ້ທີ່: https://bit.ly/39KeC0J

## ແຜນກໍ່ສ້າງເສັ້ນທາງດ່ວນ ວຽງຈັນ - ຮາໂນ້ຍ ກຳລັງຢູ່ໃນຂັ້ນພິຈາລະນາ ຄວາມເປັນໄປໄດ້

ລັດຖະບານລາວ ແລະ ຫວຽດນາມ ກຳລັງພິຈາລະນາຄວາມເປັນໄປໄດ້ໃນການສ້າງທາງດ່ວນ ທີ່ເຊື່ອມຕໍ່ ວຽງຈັນ-ຮາໂນ້ຍ ໂດຍຈະໄດ້ຮັບການຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນ. ເສັ້ນທາງນີ້ຈະປະກອບມີ 5 ໄລຍະ ເຊິ່ງຈະສ້າງເສັ້ນທາງນີ້ ຄຽງຄູ່ກັບເສັ້ນທາງ ເລກທີ 13 ໃຕ້.

ໃນປັດຈະບັນ ເສັ້ນທາງສອງໄລຍະ ແມ່ນກຳລັງຢູ່ໃນຂັ້ນພິຈາລະນາຄື: ໄລຍະທີ 1 ແມ່ນຈະແລ່ນຜ່ານ ນະຄອນ ຫຼວງວຽງຈັນ-ປາກຊັນ-ວຽງທອງ-ແທັງທຸຍ-ຮາໂນ້ຍ; ແລະ ໄລຍະທີ 2 ແມ່ນຈະແລ່ນຜ່ານ ນະຄອນຫຼວງວຽງຈັນ-ນາແປງ-ໄຊສົມບູນ-ຊຽງຂວາງ-ທ່າເລົາ (ແຂວງຫົວພັນ)-ຮາໂນ້ຍ.

ອ່ານລາຍລະອຽດຂອງຂ່າວໄດ້ທີ່: https://bit.ly/3m5VkbW ແລະ ອ່ານເພີ່ມເຕີມ ທີ່ນີ້

## ຍຸດທະສາດປ່າໄມ້ຮອດປີ2030 ມີຈຸດປະສົງເພື່ອເຮັດໃຫ້ລາວມີເນື້ອທີ່ປົກຫຸ້ມກວມເອົາ 70%

ຈຸດສຳຄັນຂອງຍຸດທະຍາດສະບັບນີ້ ແມ່ນເພື່ອບັນລຸເປົ້າໝາຍການເພີ່ມເນື້ອທີ່ປົກຫຸມປ່າໄມ້ໃຫ້ໄດ້ **70%** ໂດຍແນໃສ່ການປົກປັກຮັກສາສິ່ງແວດລ້ອມ ແລະ ເພີ່ມຄວາມອຸດົມສົມບູນຂອງຊີວະນາໆພັນ ເພື່ອໃຫ້ປະຊາຊົນສາ ມາດນຳໃຊ້ເຄື່ອງປ່າຂອງດົງ ໃນການສ້າງລາຍໄດ້.
ຍຸດທະສາດປ່າໄມ້ຮອດປີ 2030 ນີ້ ຈະໄດ້ມີການຮວບຮວມເອົາບັນດານະໂຍບາຍການຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຂອງລັດຖະບານ ເພື່ອແນໃສ່ ການແກ້ໄຂບັນຫາ ແລະ ການຄຸ້ມຄອງທີ່ດິນປ່າໄມ້.
ອ່ານລາຍລະອຽດຂອງຂ່າວໄດ້ທີ່: https://bit.ly/3CDNPjH

## ກຳລັງສຶກສາຄວາມເປັນໄປໄດ້ ໂຄງການພັດທະນາ ເຂດເສດຖະກິດພິເສດ ຢູ່ສາມແຈ ລາວ-ຈີນ-ຫວຽດນາມ ທີ່ແຂວງຜົ້ງສາລີ

ລັດຖະບານລາວໄດ້ອະນຸມັດໃຫ້ ບໍລິສັດ ຢູເຈີງ ລົງທຶນ ຈຳກັດ ສປຈີນ ສຶກສາຄວາມເປັນໄປໄດ້ ໃນການພັດ ທະນາ ແລະ ກໍ່ສ້າງເຂດເສດຖະກິດພິເສດ ຢູ່ເຂດສາມແຈປະເທດລາວ-ຈີນ-ຫວຽດນາມ ທີ່ເມືອງຍອດອູ ແຂວງຜົ້ງສາລີ. ໃນໄລຍະການສຳຫຼວດ ບໍລິສັດຈະເກັບກຳຂໍ້ມູນກ່ຽວກັບການນຳໃຊ້ທີ່ດິນໃນປັດຈຸບັນ ແລະ ສິ່ງທີ່ອາດມີການປ່ຽນ ແປງ ລວມມີປະເພດທີ່ດິນ, ສະຖານທີ່, ເນື້ອທີ່ທຳການຜະລິດຂອງປະຊາຊົນ ພ້ອມທັງສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ສຳຫຼວດພື້ນທີ່ໂດຍລວມຂອງໂຄງການ. ຫຼັງຈາກສຳເລັດການສຳຫຼວດ ແລະ ເກັບກຳຂໍ້ມູນແລ້ວ ກຸ່ມບໍລິສັດຈະໄດ້ກຳນົດເຂດພັດທະນາ ຫຼື ເຂດໂຄງການການລົງທຶນ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາໂຄງການ.
ອ່ານລາຍລະອຽດຂອງຂ່າວໄດ້ທີ່: https://bit.ly/3l701l9

# ກິດຈະກຳໃນໄຕມາດໜ້າ (ຕຸລາ – ທັນວາ 2021)

- ກອງປະຊຸມສະມາຊິກຫຼັກ ຂອງ LIWG
- ບົດສຶກສາ ລະບົບການເຂົ້າເຖິງ ແລະ ຄວາມໝັ້ນຄົງ ຂອງການຄອບຄອງ ນໍາໃຊ້ປ່າໄມ້ຕາມປະເພນີ ຂອງແມ່ຍິງ ໃນລາວ
- ການນໍາສະເໜີ ບົດສຶກສາ ສິດທິແມ່ຍິງຕໍ່ກັບທີ່ດິນ ໃນເວທີພາກພື້ນ ທີ່ຈັດໂດຍອົງການ Bread for the World
- ຊຸມຊົນແຫ່ງການຮຽນຮູ້ ກ່ຽວກັບສິດທິຂອງແມ່ຍິງຕໍ່ກັບທີ່ດິນ ແລະ ການປະຕິບັດ ໃນຂັ້ນຊຸມຊົນ
- ການປັບປຸງ ບົດສັງລວມໂດຍຫຍໍ້ ກ່ຽວກັບນິຕິກຳ ທີ່ກ່ຽວຂ້ອງກັບສິດທິທີ່ດິນ
- ການເປີດໂຕປະຕິທິນກົດໝາຍສະບັບປີ 2022
- ການຝຶກອົບຮົມຂອງໂຄງການໄລຟ໌, ການພັດທະນາຄູ່ມື, ງານແລກປ່ຽນ ກໍລະນີສຶກສາ ລະຫວ່າງໂຄງການໄລຟ໌ ກັບ ສະມາຄົມ RRDPA ແລະ ການກະກຽມ ເພື່ອດໍາເນີນກິດຈະກຳໃໝ່



ຂໍຂອບໃຈບັນດາທ່ານທີ່ອ່ານຈົດໝາຍຂ່າວຂອງພວກເຮົາ
ແລ້ວພົບກັນອີກຄັ້ງໃນສະບັບໜ້າ!

ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:

ໂທ: +85630 9815657 ອີເມລ: co@laolandinfo.org

ເວັບໄຊ: www.laolandinfo.org ເຟສບຸກ: Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG